ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ກົມໃຫຍ່ສັນຕິບານ

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ເລກທີ...729......./ຕມ

ນະຄອນຫຼວງວຽງຈັນ, ວັນທີ.26.ເມສາ.2021

# ແຈ້ງການ

ເຖິງ : - ພະແນກ ຕມ ຫ້ອງສັນຕິບານ ກອງບັນຊາການ ປກສ ແຂວງ ໃນຂອບເຂດທົ່ວປະເທດ

- ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສປປ ລາວ

ເລື່ອງ: ການຕໍ່ເວລາພັກເຊົາ ໃຫ້ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ໃນໄລຍະຈັດຕັ້ງປະຕິບັດ ຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021

- ອີງຕາມ ຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍ ການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ ໂຄວິດ-19 (COVID-19);
- ອີງຕາມ ຂໍ້ຕົກລົງ ຂອງ ທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 084/ປກສ, ລົງວັນທີ 03 ກຸມພາ 2010 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ;
- ອີງຕາມ ທິດຊີ້ນຳຂອງ ຄະນະນຳກະຊວງປ້ອງກັນຄວາມສະຫງົບ ກໍຄືກົມໃຫຍ່ສັນຕິບານ ໃນຄັ້ງວັນທີ 26 ເມສາ 2021.

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂໍຖືເປັນກຽດ ແຈ້ງມາຍັງທ່ານ ຊາບວ່າ: ນັບແຕ່ເດືອນ ເມສາ 2021 ເປັນຕົ້ນມາ ຢູ່ ສປປ ລາວ ໄດ້ກວດພົບຜູ້ຕິດເຊື້ອພະຍາດ ໂຄວິດ-19 (COVID-19) ຢູ່ຊຸມຊົນ ນະຄອນຫຼວງວຽງຈັນ ເພີ່ມຂຶ້ນຢ່າງໄວວາ ແລະ ມີຄວາມສ່ຽງສູງ ທີ່ຈະມີການລະບາດໄປຫຼາຍແຂວງ ໃນທົ່ວປະເທດ. ເພື່ອເພີ່ມທະວີມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ບໍ່ໃຫ້ພະຍາດ COVID-19 ແຜ່ລາມອອກເປັນວົງກວ້າງ ຢູ່ ສປປ ລາວ, ຈຶ່ງມີມາດຕະການ ກ່ຽວກັບການຕໍ່ເວລາພັກເຊົາຊົ່ວຄາວ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ໂດຍໃຫ້ປະຕິບັດ ຄືດັ່ງນີ້:

1. ໂຈະຊົ່ວຄາວການຕໍ່ເວລາພັກເຊົາ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຢູ່ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ບັນດາແຂວງ ທີ່ມີຄຳສັ່ງ, ແຈ້ງການ ຂອງເຈົ້າແຂວງ ຫຼື ຄະນະສະເພາະກິດ ຂັ້ນແຂວງ ກ່ຽວກັບການຫ້າມອອກຈາກສະຖານທີ່ພັກອາໄສຂອງຕົນ (Lockdown) ຕາມກຳນົດເວລາ ທີ່ລະບຸໄວ້ໃນ ຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ແລະ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ວາງອອກແຕ່ລະໄລຍະ;

2. ຮັບພິຈາລະນາຕໍ່ເວລາພັກເຊົາ ໃນກໍລະນີ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ມີຄວາມຈຳເປັນ ໃນການນຳໃຊ້ໜັງສືຜ່ານແດນ ເພື່ອດຳເນີນວຽກງານຕ່າງໆ ຢູ່ ສປປ ລາວ ເປັນຕົ້ນ: ທຸລະກຳທາງດ້ານການເງິນ, ປິ່ນປົວສຸຂະພາບ ແລະ ອື່ນໆ ທີ່ມີຄວາມຈຳເປັນ;

3. ບັນດາແຂວງ ທີ່ບໍ່ມີຄຳສັ່ງ, ແຈ້ງການ ກ່ຽວກັບການຫ້າມອອກຈາກສະຖານທີ່ພັກອາໄສຂອງຕົນ (Lockdown) ຫຼື ໃນກໍລະນີ ຍົກເລີກການປະຕິບັດຄຳສັ່ງດັ່ງກ່າວ ແມ່ນໃຫ້ດຳເນີນການຕໍ່ເວລາພັກເຊົາ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕາມກົດໝາຍ- ລະບຽບການ ໂດຍສົມທົບກັບການຈັດຕັ້ງປະຕິບັດ ແຈ້ງການ ຂອງກົມໃຫຍ່ສັນຕິບານ ສະບັບເລກທີ 191/ສບ, ລົງວັນທີ 17 ກຸມພາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ້າກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ສາຍສະໜິງ ສີວິໄລ


ຜູ້ປະສານງານ:

ພັທ ເພັດດາວົງ ແກ້ວກັນຍາ 020 5552 6405

ພັທ ວິໄລ ຕາດລາສີ 020 5544 4000

ຮອ ສຸກນາລັກ ທຳມະວົງ 020 5679 6061